ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມນ້ຳປະປາ
ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ
ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ

ເລກທີ 086 /ຄຂນສອ
ນະຄອນຫຼວງວຽງຈັນ, ວັນທີ 29 ມັງກອນ 2026

## ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ເຖິງ: ບັນດາ ບໍລິສັດ / ຫ້າງຮ້ານ ທີ່ສົນໃຈ

ເລື່ອງ: **ເຊີນເຂົ້າຮ່ວມການປະມູນສົມທຽບລາຄາ ການຈັດຊື້ສານເຄມີ ສຳລັບການຜະລິດນ້ຳປະປາ ຂອງໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ.**

1. ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ ແມ່ນໂຄງການໜຶ່ງ ທີ່ຈັດຕັ້ງປະຕິບັດໂດຍ ກົມນ້ຳປະປາ ກະຊວງໂຍທາທິການ ແລະ ຂົນສົ່ງ, ເຊິ່ງໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ ເພື່ອດຳເນີນການປະມູນຈັດຊື້ ສານເຄມີ ສຳລັບການຜະລິດນ້ຳປະປາ ຂອງໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ ດ້ວຍການປະມູນແບບສົມທຽບລາຄາ.
2. ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ ຂໍເຊີນບໍລິສັດ/ຮ້ານ ຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາ ການຈັດຊື້ສານເຄມີ ສຳລັບການຜະລິດນ້ຳປະປາ ໃຫ້ແກ່ໂຄງການດັ່ງກ່າວ, ໄລຍະເວລາສົ່ງມອບ ຫຼື ການບໍລິການແມ່ນ 30 ວັນ ພາຍຫຼັງເຊັນສັນຍາ.
3. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນສົມທຽບລາຄາ ຈະຕ້ອງສົ່ງກ່ອນ ເວລາ 15:10 ໂມງ, ຂອງວັນທີ 13 ກຸມພາ 2026, ທີ່ຫ້ອງປະຊຸມຊັ້ນ 04 ຂອງໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ (ຖະໜົນດົງປ່າລານ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ) ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ 15:10 ໂມງ, ຂອງວັນທີ 13 ກຸມພາ 2026, ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.
5. ຜູ້ເຂົ້າຮ່ວມແຂ່ງຂັນປະມູນສົມທຽບລາຄາ ສາມາດສອບຖາມຂໍ້ມູນເພີ່ມເຕີມ ໂທ 021 451826, ອີເມວ: swsshp.procurement@gmail.com.

ຫົວໜ້າໂຄງການ

ກະຊວງໂຍທາທິການ ແລະ ຂົນສົ່ງ
ໂຄງການຂະຫຍາຍ ນ້ຳປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ
ນະຄອນຫຼວງວຽງຈັນ

ນ.ສົມປາດຖະໜາ ເດດອຸດົມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມນໍ້າປະປາ
ໂຄງການຂະຫຍາຍ ນໍ້າປະປາ, ສຸຂາພິບານ ແລະ
ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ

**ແຜນຄວາມຕ້ອງການຈັດຊື້ ສານເຄມີ ສໍາລັບການຜະລິດນໍ້າປະປາ ຂອງໂຄງການຂະຫຍາຍ ນໍ້າປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 04 ແຂວງພາກເໜືອ ຂອງ ສປປ ລາວ**

| ລ/ດ | **ຊື່ຂອງສິນຄ້າ ຫຼື ການບໍລິການວຽກງານ ແລະ ລາຍລະອຽດ** | **ຫົວໜ່ວຍ** | **ຈໍານວນ (1)** | **ລາຄາຫົວໜ່ວຍ ທີ່ລວມພາສີ, ອາກອນຕ່າງໆ, ຄ່າຂົນສົ່ງ ແລະ ປະກັນໄພ (ກີບ) ຮອດສະຖານ ທີ່ສົ່ງມອບ (2)** | **ລາຄາລວມ (ກີບ) 3 = (1) + (2)** |
|---|---|---|---|---|---|
| 1. | ສານເຄມີ ເພື່ອເຮັດສ່ວນປະສົມໃຫ້ນໍ້າໃສ (Poly Aluminium Chloride) | Kg | 450 | | |
| 2. | ສານເຄມີຂ້າເຊື້ອ (Chlorine in Drinking-water) | Kg | 1,050 | | |
| | ລວມມູນຄ່າຕາມລາຍການ | | | | |
| | ອາກອນມູນຄ່າເພີ່ມ 10% (ລວມມູນຄ່າຕາມລາຍການ) | | | | |
| | ຄ່າຈົດທະບຽນສັນຍາ | | | | |
| | ລວມລາຄາທັງໝົດ | | | | |

ຮ. ຫົວໜ້າໂຄງການ

ກະຊວງໂຍທາທິການ ແລະ ຂົນສົ່ງ
ໂຄງການຂະຫຍາຍ ນໍ້າປະປາ, ສຸຂາພິບານ ແລະ ອະນາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ
ນະຄອນຫຼວງວຽງຈັນ

ນ.ສົມປາດຖະໜາ ເດດອຸດົມ